ໂຄງການ "ສ້າງຮອຍຍິ້ມດ້ວຍການແບ່ງປັນ" ປີ 3

ໃນວັນທີ 26-28/02/2019 ທີ່ຜ່ານມາ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຮ່ວມກັບ ບໍລິສັດ ຂົນສົ່ງ ສະດາທອງ. ຮ່ວມໃຈກັນລົງມອບເຄື່ອງຊ່ວຍເຫຼືອ ບັນເທົາທຸກ, ຜ້າຫົ່ມກັນໜາວ ແລະ ອຸປະກອນການສຶກສາ ໃຫ້ແກ່ ປະຊາຊົນທີ່ທຸກຍາກ ໃນເຂດ ເມືອງ ໄຊຈໍາພອນ, ແຂວງ ບໍລິຄໍາໄຊ ໄດ້ແກ່: ບ້ານ ສີບຂອນ, ບ້ານ ເມືອງຈໍ, ບ້ານ ໂພນ ເມືອງ ລວມທັງໝົດຈໍານວນ 195 ຄອບຄົວ. ເຊິ່ງນໍາໂດຍ ທ່ານ ກິດສະດາ ສຸຄະບັນດິດ ຮອງຜູ້ອໍານວຍການໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ພ້ອມດ້ວຍ ພະນັກງານ. ພິທີການຕ້ອນຮັບ ແລະ ຕາງໜ້າຮັບເຄື່ອງຊ່ວຍເຫຼືອ ນໍາໂດຍ ທ່ານ ສ້ອຍມະນີ ຈັນເນັ່ງປ່າວ ຄະນະປະຈໍາພັກເມືອງ ປະທານແນວລາວສ້າງຊາດ ພ້ອມດ້ວຍ ຄະນະ ຫ້ອງການຊາວໜຸ່ມເມືອງ, ຫ້ອງການແຮງງານ ແລະ ສະຫວັດດີການ ສັງຄົມ, ຫ້ອງວ່າການເມືອງ ແລະ ຮາກຖານຊາວ ໜຸ່ມຫ້ອງວ່າການ ກ່ອນຈະລົງໄປມອບໃຫ້ປະຊາຊົນ.





